# ພິທີເຊັນບົດບັນທຶກຄວາມເຂົ້າໃຈຮ່ວມມືສອງຝ່າຍ ລະຫວ່າງ ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສຳນັກງານປົກປ້ອງຜູ້ຝາກເງິນ




ໃນວັນທີ 11 ພຶດສະພາ 2022 ນີ້, ຢູ່ທີ່ທະນາຄານແຫ່ງ ສປປ ລາວ ກົມຄຸ້ມຄອງທະນາຄານທຸລະກິດ (ກທຄ) ແລະ ສຳນັກງານປົກປ້ອງຜູ້ຝາກເງິນ (ສປງ) ໄດ້ຈັດຕັ້ງພິທີເຊັນບົດບັນທຶກຄວາມເຂົ້າໃຈ (MOU) (ສະບັບປັບປຸງ) ຮ່ວມກັນ ເພື່ອທົບທວນຄືນຜົນການຈັດຕັ້ງປະຕິບັດ MOU ສະບັບທຳອິດ ທີ່ທັງສອງພາກສ່ວນ ໄດ້ຮ່ວມກັນລົງນາມ ໃນວັນທີ 25 ມິຖຸນາ 2019, ທັງເປັນການພັດທະນາຂອບເຂດການຮ່ວມມືຂອງສອງພາກສ່ວນ ໃນການແລກປ່ຽນຂໍ້ມູນທີ່ເປັນປະໂຫຍດເຊິ່ງກັນ ແລະ ກັນ ເຮັດໃຫ້ການປະຕິບັດວຽກງານ ຂອງແຕ່ລະພາກສ່ວນມີຄວາມຄ່ອງຕົວຂຶ້ນ ເພື່ອປະກອບສ່ວນເຂົ້າໃນການພັດທະນາວຽກງານ ຂອງຂະແໜງການທະນາຄານ ກໍ່ຄືວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ວຽກງານປົກປ້ອງເງິນຝາກຢູ່ ສປປ ລາວ ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງຂຶ້ນເທື່ອລະກ້າວ. ລົງນາມໃນ MOU (ສະ ບັບປັບປຸງ) ຄັ້ງນີ້ໂດຍ ທ່ານ ອາລຸນ ບຸນຍົງ ຫົວໜ້າ ກຄທ ແລະ ທ່ານ ນ. ແສງດາວວີ ວົງຄຳຊາວ ຫົວໜ້າ ສປງ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ), ມີຄະນະກົມ, ຄະນະພະແນກ ແລະ ພະນັກງານຂອງ

ທັງສອງພາກສ່ວນ ໄດ້ເຂົ້າຮ່ວມຢ່າງພ້ອມພຽງ. ໃນພິທີດັ່ງກ່າວ ທ່ານ ໂພທອງ ວົງໄຊ ຮອງຫົວໜ້າ ສປງ ໄດ້ຕາງໜ້າໃຫ້ສອງພາກສ່ວນຂຶ້ນລາຍງານສະພາບການ ຈັດຕັ້ງປະຕິບັດ MOU ໃນໄລຍະຜ່ານມາ.






ໃນພິທີຄັ້ງນີ້, ຍັງໄດ້ຮັບຟັງການໂອ້ລົມຂອງ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊຶ່ງທ່ານໄດ້ສະແດງຄວາມຍ້ອງຍໍ-ຊົມເຊີຍ ສອງພາກສ່ວນ ທີ່ສາມາດຈັດຕັ້ງປະຕິບັດ MOU ຮ່ວມກັນ ຢ່າງມີຜົນສໍາເລັດ, ພ້ອມທັງໄດ້ເນັ້ນໜັກ ໃຫ້ທັງສອງພາກສ່ວນຕ້ອງໄດ້ເພີ່ມຄວາມເອົາໃຈໃສ່ໃນການຮ່ວມມື ໃຫ້ນັບມືມີຄວາມກົມກຽວ ສາມາດສະໜອງຂໍ້ມູນເຊິ່ງກັນ ແລະ ກັນ ໄດ້ຢ່າງມີປະສິດທິຜົນ; ຕ້ອງມີການພັດລະນາລະບົບເກັບກໍາຂໍ້ມູນ ໃຫ້ມີຄວາມທັນສະໄໝ; ສ້າງກົນໄກການຈັດອັນດັບຄວາມສ່ຽງ ຂອງບັນດາທະນາຄານທຸລະກິດ ເພື່ອສະໜັບສະໜູນ ໃຫ້ການເກັບເບ້ຍປະກັນເງິນຝາກຕາມປະເພດຄວາມສ່ຽງຂອງ ສປງ ໃນອະນາຄົດ; ເອົາໃຈໃສ່ໃນການຈັດຝຶກອົບຮົມ-ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ຢ່າງເປັນປົກກະຕິ ແລະ ທີ່ສໍາຄັນຕ້ອງໄດ້ຍົກສູງຄວາມຮັບຜິດຊອບ ໃນການເກັບຮັກສາຄວາມລັບຂອງຂໍ້ມູນທີ່ໄດ້ມີການແລກປ່ຽນເຊິ່ງກັນ ແລະ ກັນ.



ຂ່າວ: ສໍານັກງານປົກປ້ອງຜູ້ຝາກເງິນ

ພາບ: ທ ສົມພິດ ທໍາມະວົງ

*ຢູ່ເມືອງລາວ ໃຊ້ເງິນກີບລາວ*